ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ ຫ້ອງການ ທຫລ
ໂທ/ແຟກ (856-21) 213109, 213110

# ກອງປະຊຸມສໍາມະນາວິຊາການ
# ໃນຫົວຂໍ້: “ມາດຕະຖານການລາຍງານການເງິນສາກົນ (IFRS): ການພັດທະນາ ແລະ ກວດສອບຄວາມຖືກຕ້ອງຂອງ ແບບຈໍາລອງໃນ ມາດຕະຖານທີ 9"



ໃນວັນທີ 13 ມີນາ 2026 ທີ່ຫ້ອງປະຊຸມພະທາດຫຼວງ ຊັ້ນ 7 ທຫລ ໄດ້ຈັດກອງປະຊຸມສໍາມະນາວິຊາການ ໃນຫົວຂໍ້: “ມາດຕະຖານການລາຍງານການເງິນສາກົນ (IFRS): ການພັດທະນາ ແລະ ກວດສອບຄວາມຖືກຕ້ອງຂອງແບບຈໍາລອງໃນ ມາດຕະຖານທີ 9" ຂຶ້ນ ໂດຍການເປັນປະທານຂອງ ທ່ານ ປອ. ວິໄລຄໍາ ກາດອຸດົມ ຮອງຫົວໜ້າກົມຄຸ້ມຄອງທະນາຄານທຸລະກິດ ໂດຍມີຜູ້ເຂົ້າຮ່ວມຕາງໜ້າຈາກກົມບັນຊີ ແລະ ການເງິນ, ກົມຄຸ້ມຄອງສະຖາບັນການເງິນທີ່ບໍ່ແມ່ນທະນາຄານ, ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ, ກະຊວງການເງິນ ແລະ ທະນາຄານທຸລະກິດທົ່ວລະບົບ ເຂົ້າຮ່ວມຢ່າງພ້ອມພຽງ.

ຈຸດປະສົງຂອງການຈັດສຳມະນາໃນຄັ້ງນີ້ກໍ່ແມ່ນເພື່ອສ້າງຄວາມຮູ້ຄວາມເຂົ້າໃຈໃຫ້ແກ່ຜູ້ເຂົ້າຮ່ວມ ກໍ່ຄື ທັງຜູ້ຄຸ້ມຄອງ ແລະ ຜູ້ຈັດຕັ້ງປະຕິບັດ ກໍ່ຄື ທະນາຄານທຸລະກິດ ເພື່ອຮັບຊາບ ແລະ ເຂົ້າໃຈເຖິງວິທີເບື້ອງຕົ້ນໃນການປະເມີນ, ການກວດສອບຄວາມຖືກຕ້ອງ ຂອງແບບຈຳລອງ ຫຼື ໂມເດລ ທີ່ຈະນຳໃຊ້ຕາມມາດຕະຖານ IFRS9 ໂດຍສະເພາະ ແບບຈຳລອງ ECL ທີ່ຕິດພັນກັບການຫັກເງິນແຮ ຫຼື ຄ່າເສື່ອມດ້ານສິນເຊື່ອ, ພາຍຫຼັງ ເດືອນກຸມພາ 2026 ທີ່ຜ່ານມາ ທີ່ກົມບັນຊີ ແລະ ການເງິນ (ທຫລ) ໄດ້ອອກແຈ້ງການ ສະບັບເລກທີ 0015/ກບງ ກ່ຽວກັບ ການຂະຫຍາຍເວລາໃນການຈັດຕັ້ງປະຕິບັດມາດຕະຖານສາກົນດ້ານການລາຍງານການເງິນ (IFRS) ອອກໄປຕື່ມ ຊຶ່ງກອງປະຊຸມສຳມະນາຄັ້ງນີ້ແມ່ນໄດ້ຮັບກຽດຈາກຜູ້ຊ່ຽວຊານຂອງບໍລິສັດ ເອີນແອນຍັງລາວ ຈຳກັດ (EY) ເປັນຜູ້ບັນຍາຍ.





ກອງປະຊຸມໄດ້ດຳເນີນໄປເປັນເວລາເຄິ່ງວັນຕາມວາລະ ເຊິ່ງຜູ້ເຂົ້າຮ່ວມກໍ່ໃຫ້ຄວາມສົນໃຈໃນຫົວຂໍ້ສຳມະນາເປັນຢ່າງດີ ສະແດງອອກໃນການແລກປ່ຽນຖາມ-ຕອບ ຄຳຖາມຕິດພັນໃນກອງປະຊຸມຢ່າງຄຶກຄື້ນ ແລະ ຈະແຈ້ງ ສາມາດແກ້ໄຂຂໍ້ຂ້ອງໃຈ ແລະ ຈຸດຄົງຄ້າງໃນການນຳໃຊ້ແບບຈຳລອງ ECL ທີ່ຕິດພັນກັບການຫັກເງິນແຮ ຫຼື ຄ່າເສື່ອມດ້ານສິນເຊື່ອ ໄດ້ດີສົມຄວນ ພ້ອມນີ້, ໃນຕອນທ້າຍກອງປະຊຸມ ທ່ານປະທານຍັງໄດ້ຮຽກຮ້ອງມາຍັງທະນາຄານທຸລະກິດທຸກພາກສ່ວນສືບຕໍ່ກະກຽມຄວາມພ້ອມໃນການຈັດຕັ້ງປະຕິບັດມາດຕະຖານສາກົນດ້ານການລາຍງານການເງິນ (IFRS) ແຕ່ປີ 2026-2027 ໂດຍສະເພາະ ມາດຕະຖານ IFRS 7, IFRS 9 ແລະ IFRS 13 ເພື່ອໃຫ້ສາມາດຈັດຕັ້ງປະຕິບັດມາດຕະຖານແບບເຕັມສ່ວນ (Full IFRS) ນັບແຕ່ປີ 2028 ເປັນຕົ້ນໄປ.

**ຂ່າວ ແລະ ພາບ: ຫ້ອງການທະນາຄານແຫ່ງ ສປປ ລາວ**

**ຮັກບ້ານເກີດເມືອງນອນ ໃຊ້ ຈ່າຍ ທອນ ເປັນເງິນກີບ**